ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**********

ກະຊວງການເງິນ

ກົມພາສີ

01616

ເລກທີ............../ກພສ

ນະຄອນຫຼວງວຽງຈັນ, ວັນທີ...02 APR 2018...

# ແຈ້ງການ

ເຖິງ: - ຫົວໜ້າກອງຄຸ້ມຄອງພາສີ ທົ່ວປະເທດ

- ຫົວໜ້າດ່ານພາສີຊາຍແດນໃນຂອບເຂດທົ່ວປະເທດ
- ຜູ້ປະກອບການສົ່ງອອກສິນຄ້າປະເພດແຮ່ທາດ

ເລື່ອງ: ການຄຸ້ມຄອງການສົ່ງອອກແຮ່ທາດ

- ອີງຕາມ ກົດໝາຍວ່າດ້ວຍພາສີ ເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ກົດໝາຍວ່າດ້ວຍພາສີ ສະບັບປັບປຸງ ເລກທີ 057/ສພຊ, ລົງວັນທີ 24 ທັນວາ 2014;
- ອີງຕາມ ຄຳສັ່ງນາຍົກລັດຖະມົນຕີ ເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018 ວ່າດ້ວຍການປັບປຸງລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດ ຢູ່ ສປປ ລາວ;

ເພື່ອເພີ່ມທະວີການຄຸ້ມຄອງການສົ່ງອອກແຮ່ທາດໃຫ້ມີຄວາມກະທັດຮັດງ່າຍດາຍ, ຮັດກຸມ ແລະ ຄ່ອງຕົວ; ສອດຄ່ອງກັບທິດຊີ້ນຳຂອງລັດຖະບານໃນການປັບປຸງລະບຽບການ ແລະ ກົນໄກການປະງານໃນການດຳເນີນທຸລະກິດ ລວມເຖິງການຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກສິນຄ້າ ໃຫ້ສະດວກ ແລະ ງ່າຍດາຍ,

**ກົມພາສີ ອອກແຈ້ງການ ດັ່ງນີ້:**

1. ບັນດາໂຄງການສຳປະທານຂຸດຄົ້ນບໍ່ແຮ່ທີ່ໄດ້ຮັບອະນຸມັດຈາກລັດຖະບານ ແລະ ໄດ້ຮັບອະນຸຍາດສົ່ງອອກຈາກຂະແໜງບໍ່ແຮ່ແລ້ວ ຕ້ອງສະເໜີເຖິງກົມພາສີ ເພື່ອຄົ້ນຄວ້າເງື່ອນໄຂໃນການປະຕິບັດພັນທະຄ່າພາສີ ແລະ ພັນທະອື່ນ ທີ່ຕິດພັນກັບການສົ່ງອອກ.
2. ກົມພາສີ ອອກແຈ້ງການກ່ຽວກັບການປະຕິບັດພັນທະຄ່າພາສີ ແລະ ພັນທະອື່ນ ໃຫ້ສອດຄ່ອງກັບກົດໝາຍ, ລະບຽບການກ່ຽວຂ້ອງ ແລະ ການອະນຸມັດຂອງລັດຖະບານ.
3. ໂຄງການທີ່ໄດ້ຮັບແຈ້ງການຂອງກົມພາສີແລ້ວ ໃຫ້ດຳເນີນຂັ້ນຕອນການແຈ້ງພາສີ ເພື່ອສົ່ງອອກຜ່ານດ່ານພາສີຊາຍແດນທີ່ໄດ້ຮັບອະນຸມັດ. ໃນການສົ່ງອອກຄັ້ງຕໍ່ໆ ໄປແມ່ນໃຫ້ຖືເອົາເນື້ອແຈ້ງການດັ່ງກ່າວ ເປັນບ່ອນອີງໃນການປະຕິບັດພັນທະຄ່າພາສີ ແລະ ພັນທະອື່ນ ຈົນກວ່າຈະມີການປ່ຽນແປງ.
4. ໃນກໍລະນີມີການເຈລະຈາ ແລະ ດັດແກ້ເນື້ອໃນຂອງສັນຍາສຳປະທານໂຄງການ, ເຈົ້າຂອງໂຄງການດັ່ງກ່າວ ຕ້ອງສະເໜີໃຫ້ກົມພາສີຄົ້ນຄວ້າຄືນໃໝ່ ກ່ຽວກັບເງື່ອນໄຂການປະຕິບັດພັນທະຄ່າພາສີ ແລະ ພັນທະອື່ນ.
5. ມອບໃຫ້ກອງຄຸ້ມຄອງພາສີທົ່ວປະເທດ ເປັນເຈົ້າການຊີ້ນຳ ແລະ ກວດກາດ່ານພາສີຊາຍແດນ ໃນການຈັດຕັ້ງປະຕິບັດແຈ້ງການສະບັບນີ້ຢ່າງເຂັ້ມງວດ.
6. ໃນການຈັດຕັ້ງປະຕິບັດຕົວຈິງ ຖ້າພົບຂໍ້ຫຍຸ້ງຍາກໃຫ້ລາຍງານກົມພາສີເພື່ອມີຄຳເຫັນແນະນຳ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ຮັກສາການຫົວໜ້າກົມພາສີ**

ບຸນປະເສີດ ສີກຸນລະບຸດ

ນຳສົ່ງ:

- ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ 1 ສະບັບ "ເພື່ອລາຍງານ"
- ຄະນະກົມພາສີ, ທ່ານລະ 1 ສະບັບ "ເພື່ອຕິດຕາມ"
- ບັນດາພະແນກການກົມພາສີ, ພະແນກລະ 1 ສະບັບ "ເພື່ອປະສານສົມທົບ"